Learn About Lead in Remedies

Protect Your Family from Lead Poisoning

Many remedies have lead in them that can hurt your child. You cannot tell by looking at or tasting a remedy if it has lead in it.

What are Remedies?

- Remedies are known as traditional, alternative, natural, or herbal medicine that are used across the world for many reasons.
- Remedies can have herbs, minerals, metals, or animal products in them.
- Lead and other metals are sometimes put into remedies on purpose or can get into remedies during grinding, coloring, from the packaging, or if the ingredients are grown in soil with lead in it.

Can Lead in Remedies Hurt My Child?

Lead in remedies or from other sources can hurt your child or unborn baby's growth and development. It can also make it hard for your child to learn and pay attention

How Do I Know if My Child has Lead Poisoning?

Most children with lead poisoning do not look or act sick. The only way to know if your child has lead poisoning is to get a blood test for lead. If you think your child has been given one of these remedies, ask your child's doctor to test your child for lead, or reach out to your local Childhood Lead Poisoning Prevention Program (CLPPP) for more information.

Common Remedies that Contain Lead



- **Greta and Azarcon** (also known as Alarcon, Coral, Luiga, Maria Luisa, or Rueda) are fine powders used in Latino cultures for upset stomach and other illnesses. The powders are often yellow, orange, and/or red and have been found to contain up to 90% lead.
- **Kohl and Surma** are black powders used in South Asian and Middle Eastern cultures mainly as a cosmetic, but also on the navel of a newborn child as a medicine to treat skin infections.
- **Pay-loo-ah** is a red powder used in Southeast Asian countries to treat children with rash or high fever.

More Remedies that Contain Lead

	Remedy:	Used for:
Latin America	Albayalde, Albayaidle	"Empacho" (vomiting, colic, apathy, lethargy)
	Azarcon, Alarcon, Coral, Greta, Luiga, Maria Luisa, Rueda	Stomach ache
	Litarigiro	Antiperspirant and deodorant
Middle East	Anzroot	Vomiting, diarrhea
	Bint al Zahab, Bint, Bend Dahab	Diarrhea, colic, constipation, general newborn use
	Bokhoor	Calming fumes
	Cebagin Santrinj, Farouk	Teething powder
	Esfand	General health, protect against evil eye
	Jawani Badeyan	Stomach ache, nausea, digestion
	Kajal, Kwalli, Kohl, Al-Kahl, Saoott, Surma, Tiro, Tozali	Cosmetic; astringent for eye injury, umbilical stump, teething powder; protect against evil eye
	Lozeena	Food coloring
Asia	Ba Bow Sen	Hyperactivity, nightmares in children
	Daw tway	Digestion
	Hai Ge Fen	Digestive & stomach problems
	Pay-loo-ah	Rash, high fever
	Po Ying Tan	Minor illness in children

continued on next page

	Remedy:	Used for:
India	Bala goli/fita	Stomach ache, dissolved in "gripe water"
	Balguti Kesariya	Rickets, cough/cold, worms, teething, digestion
	Deshi Dewa	Fertility
	Gashard, Kandu, Bali Gali	Digestion, stomach ache
	Ghutti	Indigestion, vomiting, teething, flatulence
	Kushta	Disease of the heart, brain, liver, stomach
	Pushpadhanwa	Fertility

For more information, visit go.cdph.ca.gov/LeadFreeKids or contact:

CDPH California Department of Public Health

Adapted with permission from Orange County CLPPP
10/2024 © 2024, California Department of Public Health

ຮຽນຮູ້ກ່ຽວກັບ ສານຕະກົ່ວ ໃນຢາແຜນພື້ນເມືອງ

ປ້ອງກັນຄອບຄົວຂອງທ່ານຈາກການໄດ້ຮັບພິດຈາກສານຕະກົ່ວ

ຢາຫຼາຍຊະນິດມີສ່ວນປະສົມຂອງສານຕະກົ່ວ ເຊິ່ງອາດຈະເປັນອັນຕະລາຍຕໍ່ລູກຫຼານຂອງທ່ານໄດ້. ທ່ານບໍ່ສາມາດບອກໄດ້ຈາກການມອງດູ ຫຼື ຊີມຢາ ນັ້ນວ່າມີສ່ວນປະສົມຂອງສານຕະກົ່ວຢູ່ ຫຼື ບໍ່.

ຢາແຜນພື້ນເມືອງແມ່ນຫຍັງ?

- ຢາແຜນພື້ນເມືອງ ເປັນທີ່ຮູ້ຈັກກັນວ່າເປັນການແພດແຜນໂບລານ ການແພດທາງເລືອກ ການແພດທຳມະຊາດ ຫຼື ຢາສະໝຸນໄພ ເຊິ່ງນຳມາໃຊ້ກັນຢ່າງແຜ່ຫຼາຍທົ່ວໂລກດ້ວຍເຫດຜົນຫຼາຍຢ່າງ.
- ຢາແຜນພື້ນເມືອງອາດຈະມີສ່ວນປະກອບຈາກສະໝຸນໄພ, ແຮ່ທາດ, ໂລຫະ ຫຼື ຜະລິດຕະພັນຈາກສັດ.
- ບາງຄັ້ງມີການຈົງໃຈເຕີມສານຕະກົ່ວແລະໂລຫະອື່ນໆ ໃສ່ໃນຢາແຜນພື້ນເມືອງ ຫຼື ສານເຫຼົ່ານັ້ນອາດຈະເກີດການປົນເປື້ອນໃນກະບວນການບົດ, ການປະສົມສີ ຈາກບັນຈຸພັນ ຫຼື ຖ້າອັດຖຸດິບທີ່ນຳມາໃຊ້ປຸກໃນດິນທີ່ມີສານຕະກົ່ວປົນເປື້ອນຢູ່.

ສານຕະກົ່ວໃນຢາແຜນພື້ນເມືອງຈະເປັນອັນຕະລາຍຕໍ່ລູກຂອງຂ້າພະເຈົ້າບໍ?

ສານຕະກົ່ວທີ່ປົນເປື້ອນຢູ່ໃນຢາແຜນພື້ນເມືອງ ຫຼື ມາຈາກແຫຼ່ງອື່ນໆ ອາດຈະສົ່ງຜົນກະທົບຕໍ່ການຈະເລີນເຕີບໂຕ ແລະພັດທະນາການຂອງລູກ ຫຼື ເດັກທີ່ຢູ່ໃນຄ້ອງຂອງທ່ານໄດ້. ນອກຈາກນີ້ຍັງອາດຈະເຮັດໃຫ້ລູກຂອງທ່ານຮຽນຮູ້ແລະມີສະມາທິໄດ້ຍາກເຊັ່ນກັນ

ລະຮູ້ໄດ້ຢ່າງໃດວ່າລູກຂອງຂ້າພະເຈົ້າໄດ້ຮັບພິດຈາກສານຕະກົ່ວ?

ເດັກສ່ວນໃຫຍ່ທີ່ມີພາວະພິດຈາກສານຕະກົ່ວຈະບໍ່ສະແດງອາການ ຫຼື ມີທ່າທີທີ່ເບິ່ງວ່າເຈັບປ່ວຍ. ວິທີດຽວທີ່ຈະຮູ້ໄດ້ວ່າລູກຂອງທ່ານມີພາວະພິດຈາກສານຕະກົ່ວ ຫຼື ບໍ່ ແມ່ນການກວດເລືອດຫາສານຕະກົ່ວ. ຖ້າທ່ານສົງໄສວ່າລູກຂອງທ່ານໄດ້ຮັບຢາແຜນພື້ນເມືອງຊະນິດໃດຊະນິດໜຶ່ງເຫຼົ່ານີ້ ກະລຸນາຂໍໃຫ້ທ່ານໝໍຂອງລູກທ່ານກວດຫາປະລິມານສານຕະກົ່ວໃນຕົວລູກຂອງທ່ານ ຫຼື ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມຈາກໂຄງການປ້ອງກັນພາວະພິດຈາກສານຕະກົ່ວໃນເດັກນ້ອຍ (CLPPP) ໃນທ້ອງຖິ່ນຂອງທ່ານ.

ຢາແຜນພື້ນເມືອງທົ່ວໄປ ທີ່ມີສ່ວນ ປະສົມຂອງ ສານຕະກົ່ວ



- ຜົງເກຣຕາ (Greta) ແລະ ຜົງອາຊາຄອນ (Azarcon) (ຫຼື ທີ່ຮູ້ຈັກກັນໃນຊື່ອາລາຄອນ (Alarcon), ຄໍຣອລ (Coral), ລຸຍຊາ (Luisa), ມາເຣຍລຸຍຊາ (Maria Luisa) ຫຼື ຮຸເອດາ (Rueda) ແມ່ນຜົງລະອຽດທີ່ໃຊ້ໃນອັດທະນະທຳລາຕິນເພື່ອຮັກສາອາການເຈັບທ້ອງ ແລະອາການເຈັບປ່ວຍອື່ນໆ. ຜົງດັ່ງກ່າວມັກຈະມີສີເຫຼືອງ, ສີສົ້ມ ແລະ/ຫຼື ສີແດງ ແລະ ພົບວ່າມີສ່ວນປະກອບຂອງສານຕະກົ່ວສູງເຖິງ 90%
- ຜົງໂຄລ໌ (Kohl) ແລະຜົງເຊີມາ (Surma) ແມ່ນຜົງສີດຳທີ່ໃຊ້ກັນໃນອັດທະນະທຳບໍລິເວນພາກໃຕ້ອາຊີແລະຕະເວັນອອກກາງ ໂດຍຫຼັກແລ້ວໃຊ້ເປັນເຄື່ອງສຳອາງ ແຕ່ຍັງໃຊ້ທາສາຍບືຂອງເດັກເກີດໃໝ່ ເພື່ອເປັນຢາຮັກສາການຕິດເຊື້ອທາງຕາຫນັງອີກດ້ວຍ.
- ຜົງເພລູອາ (Pay-loo-ah) ແມ່ນຜົງສີແດງທີ່ໃຊ້ໃນປະເທດອາຊີຕາເວັນອອກສຽງໃຕ້ເພື່ອຮັກສາເດັກນ້ອຍທີ່ເປັນຜິດເຜື່ນ ຫຼື ເປັນໄຂ້ສູງ.

ຢາແຜນພື້ນເມືອງອື່ນໆທີ່ມີສ່ວນປະສົມຂອງສານຕະກົ່ວ

ຜົງແດງ

ຜົງເຫຼືອງ

ຜົງດຳ

ຢາແຜນພື້ນເມືອງ:	ໃຊ້ສຳລັບ:
Albayalde, Albayaidle	"ເອັມປາໃຊ" ("Empacho") (ອາການຮາກ, ອາການຈຸກສຽດໃນຊ່ອງທ້ອງ, ອາວົມຮ້ອຍຊາ, ພາວະຊ້ອງຊຶມ)
Azarcon, Alarcon, Coral, Greta, Luisa, Maria Luisa, Rueda	ເຈັບທ້ອງ
Litarigiro	ຢາຕ້ານເຫື່ອ ແລະ ຢາລະງັບກົ່ນກາຍ
Anzroot	ອາການຮາກ, ທ້ອງເສຍ
Bint al Zahab, Bint, Bend Dahab	ທ້ອງເສຍ, ອາການຈຸກສຽດໃນຊ່ອງທ້ອງ, ທ້ອງຜູກ, ໃຊ້ຮັກສາອາການທົ່ວໄປສຳລັບເດັກເກີດໃໝ່
Bokhoor	ໄອລະເຫີຍທີ່ເຮັດໃຫ້ຈິດໃຈສະຫງົບ
Cebagin Santrinj, Farouk	ຜົງບັນເທົາອາການທີ່ເກີດຈາກພັນໆອກ
Esfand	ຮັກສາສຸຂະພາບໂດຍລວມ, ເຄື່ອງລາງປ້ອງກັນຄຸນໄສ
Jawani Badeyan	ເຈັບທ້ອງ, ອາການປວດຮາກ, ຊ່ວຍໃນການຍ່ອຍອາຫານ
Kajal, Kwalli, Kohl, Al-Kahl, Saoott, Surma, Tiro, Tozali	ເຄື່ອງສຳອາງ; ສານຜາດສະໝານສຳລັບອາການບາດເຈັບທີ່ຕາ, ສາຍບື, ຜົງບັນເທົາອາການທີ່ເກີດຈາກພັນໆອກ; ເຄື່ອງລາງປ້ອງກັນຄຸນໄສ
Lozeena	ສີປະສົມອາຫານ
Ba Bow Sen	ພາວະຢູ່ບໍ່ນິ່ງ, ຜັນຮ້າຍໃນເດັກ
Daw tway	ຊ່ວຍໃນການຍ່ອຍອາຫານ
Hai Ge Fen	ບັນຫາກ່ຽວກັບການຍ່ອຍອາຫານ ແລະ ກະເພາະອາຫານ
Pay-loo-ah	ຜິດຜື້ນ, ໄຂ້ສູງ
Po Ying Tan	ອາການເຈັບປ່ວຍເລັກນ້ອຍໃນເດັກ

ໄປໜ້າຕໍ່ໄປ

ອື່ນໆ

ຢາແຜນພື້ນເມືອງ:	ໃຊ້ສຳລັບ:
Bala goli/fita	ອາການເຈັບທ້ອງ ປະເພດລະລາຍໃນ "ນ້ຳກຣາຍ"
Balguti Kesariya	ພະຍາດກະດູກອ່ອນໃນເດັກ, ໂອ/ເປັນຫວັດ, ຂໍ້ບົ່ວພະຍາດ, ຜັນໆອກ, ຊ່ວຍໃນການຍ່ອຍອາຫານ
Deshi Dewa	ພາວະເຊື່ອມພັນ
Gashard, Kandu, Bali Gali	ຊ່ວຍໃນການຍ່ອຍອາຫານ, ເຈັບທ້ອງ
Ghutti	ອາຫານບໍ່ຍ່ອຍ, ອາການຮາກ, ຜັນໆອກ, ທ້ອງອືດ
Kushta	ພະຍາດຫົວໃຈ, ພະຍາດສະໝອງ, ພະຍາດຕັບ, ພະຍາດກະເພາະອາຫານ
Pushpadhanwa	ພາວະຈະເຊື່ອມພັນ

ສຳລັບຂໍ້ມູນເພີ່ມເຕີມ ໄປທີ່ go.cdph.ca.gov/LeadFreeKids ຫຼື ຕິດຕໍ່:

CDPH California Department of Public Health

(Lao)

ດັດແປງໂດຍໄດ້ຮັບອະນຸຍາດຈາກ Orange County CLPPP 10/2024 © 2024 ພະແນກສາທາລະນະສຸກລັດຄາລິຟໍເນຍ